ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

PCD

ເລກທີ: 041 /ພກພ

ນະຄອນຫຼວງວຽງຈັນ, ວັນທີ: 14 ມີນາ 2024

ຮຽນ: ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ

ເລື່ອງ: ກຳນົດມື້ປິດປຶ້ມທະບຽນຜູ້ຖືຄອງຮຸ້ນ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ພກພ ຄັ້ງທີ 1/2024 ສະບັບເລກທີ 040 /ພກພ/2024, ລົງວັນທີ 13 ມີນາ 2024.

ຜູ້ອຳນວຍການໃຫຍ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ພກພ ໄດ້ກຳນົດເອົາວັນທີ 27 ມີນາ 2024 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ແລະ ໄດ້ຮັບເງິນປັນຜົນ ປະຈຳປີ 2023 ໂດຍຈະຈ່າຍເງິນປັນຜົນເປັນຈຳນວນເງິນ 12.804.000.000 ກີບ ຫຼື 22 ກີບຕໍ່ຮຸ້ນ, ກຳນົດວັນທີ 24 ພຶດສະພາ 2024 ເປັນມື້ຈ່າຍເງິນປັນຜົນ.

ສຳລັບມື້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ແມ່ນວັນທີ 26 ເມສາ 2024, ເວລາ 09:00 ໂມງ ທີ່ຊັ້ນ 12, ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງ ຈັນ, ສປປ ລາວ.

ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023. ມີລາຍລະອຽດດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022;

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2023 ແລະ ເອກະສານລາຍງານການເງິນ ປະຈຳປີ 2023 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ;

ວາລະທີ 3: ພິຈາລະນາ ແລະ ຮັບຮອງ ການຈັດສັນກາໄລສຸດທິ ປະຈາປີ 2023 ເຂົ້າຄັງສາຮອງຕ່າງໆ ທີ່ກົດໝາຍກຳນົດໄວ້ ແລະ ຈ່າຍເງິນປັນຜົນ;

ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024;

ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2024;

ວາລະທີ 6: ພິຈາລະນາ ແລະ ຮັບຮອງເອົາ ການລາອອກຈາກຕຳແໜ່ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່;

ວາລະທີ 7: ພິຈາລະນາ ແລະ ຮັບຮອງແຕ່ງຕັ້ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່ໃໝ່;

ວາລະທີ 8: ພິຈາລະນາ ແລະ ຮັບຮອງ ອາຍຸການສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2024-2026.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

ວາລະທີ 7: ພິຈາລະນາ ແລະ ຮັບຮອງແຕ່ງຕັ້ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່ໃໝ່;

ວາລະທີ 8: ພິຈາລະນາ ແລະ ຮັບຮອງ ອາຍຸການສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2024-2026.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

**ຜູ້ອຳນວຍການໃຫຍ່**

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
Phousy Construction and Development Public Company
ນະຄອນ ຫຼວງ ວຽງຈັນ

**ສີທາ ພິມມະຈິດ**

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com